PetroTrade
ບໍລິສັດ ປິໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ
PETROLEUM TRADING LAO PUBLIC COMPANY
ຖະໜົນ: ກຳແພງເມືອງ, ບ້ານໂພນທັນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສ ປ ປ ລາວ ໂທ: 856 21 264834-5 ແຟັກ: 856021 264836
Kampheangmueng Rd, Phonthan Village, Xaysettha District, Vientiane Capital, Lao P.D.R, Tel: 856 21 264834-5, Fax: 856021 264836

ເລກທີ: 0089 ປທລ/2024

ນະຄອນຫຼວງວຽງຈັນ, ວັນທີ: 07 ມີນາ 2024

**ຮຽນ:** ທ່ານ ຫົວໜ້າ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ
ທ່ານ ຜູ້ອຳນວຍການໃຫຍ່ ຕະຫຼາດຫຼັກຊັບລາວ
ບັນດາ ທ່ານ ຜູ້ຖືຮຸ້ນ ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ

**ເລື່ອງ:** ການແຈ້ງມະຕິສຳຄັນຂອງກອງປະຊຸມສະພາບໍລິຫານຄັ້ງທີ 1/2024

- ອີງຕາມຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄ້ອງຫຼັກຊັບ ວ່າດ້ວຍລະບຽບການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 27/ຄຄຊ, ລົງວັນທີ 29 ມີນາ 2022.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ສະບັບເລກທີ 008/ຕລຊລ, ລົງວັນທີ 27 ກັນຍາ 2018.

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (“ບໍລິສັດ” ຫຼື “ປທລ”) ຂໍຖືເປັນກຽດແຈ້ງໃຫ້ທ່ານຊາບ ກ່ຽວກັບ ມະຕິທີ່ສຳຄັນຂອງກອງປະຊຸມສະພາບໍລິຫານຄັ້ງທີ 1/2024 ໃນວັນທີ 7 ມີນາ 2024 ດັ່ງລາຍລະອຽດລຸ່ມນີ້:

1. ຮັບຮອງເອົາ ບົດບັນທຶກກອງປະຊຸມສະພາບໍລິຫານ ປທລ ຄັ້ງທີ 4/2023 ເມື່ອວັນທີ 16 ພະຈິກ 2023;
2. ຮັບຮອງເອົາ ບົດລາຍງານຜົນການດຳເນີນທຸລະກິດ ປະຈຳປີ 2023 ແລະ ເອກະສານລາຍງານການເງິນທີ່ຜ່ານການກວດສອບຂອງຜູ້ກວດສອບພາຍນອກ ປະຈຳປີ 2023 ເພື່ອນຳສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2023 ພິຈາລະນາ ແລະ ຮັບຮອງ;
3. ຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2024 ເພື່ອນຳສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2023 ພິຈາລະນາ ແລະ ຮັບຮອງ;
4. ຮັບຮອງບໍ່ໃຫ້ມີການປັນຜົນ ຈາກຜົນການດຳເນີນທຸລະກິດປະຈຳປີ 2023 ອັນເນື່ອງມາຈາກບໍລິສັດ ຂາດທຶນສະສົມ ໃນຊຸມປີຜ່ານມາ ເພື່ອນຳສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2023 ພິຈາລະນາ ແລະ ຮັບຮອງ;
5. ຮັບຮອງແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກຄື ບໍລິສັດ PriceWaterhouse Coopers (Lao) Sole Co., Ltd. (“PWC”) ພ້ອມທັງກຳນົດຄ່າຈ້າງ ປະຈຳປີ 2024 ບໍ່ເກີນ 37.000 ໂດລາສະຫະລັດ; ໃຫ້ນຳສະເໜີໃນກອງປະຊຸມ ສາມັນຜູ້ຖືຮຸ້ນ ປະຈຳປີ 2023 ພິຈາລະນາ ແລະ ຮັບຮອງ;
6. ຮັບຮອງການລາອອກຈາກຕຳແໜ່ງ ປະທານສະພາບໍລິຫານ ປທລ ຂອງ ທ່ານ ຫວ່າງ ອັຕະນະວົງສ໌ ອັນເນື່ອງມາຈາກ ຄົບວາລະ ເພື່ອນຳສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາ ແລະ ຮັບຮອງ;

7. ຮັບຮອງ ທ່ານ ສີລາ ວຽງແກ້ວ ເປັນ ປະທານສະພາບໍລິຫານ ອິດສະຫຼະ ເພື່ອນຳສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນ ພິຈາລະນາ ແລະ ຮັບຮອງ;

8. ຮັບຮອງອາຍຸການຂອງສະມາຊິກສະພາບໍລິຫານ ປທລ ປະຈຳສົກປີ 2025-2027 ໃຫ້ນຳສະເໜີໃນກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2023 ພິຈາລະນາ ແລະ ຮັບຮອງ ໂດຍມີລາຍຊື່ ແລະ ຕຳແໜ່ງຕໍ່ໄປນີ້:

   1. ທ່ານ ສີລາ ວຽງແກ້ວ : ປະທານສະພາບໍລິຫານ ອິດສະລະ;
   2. ທ່ານ ຄຳສອນ ສິດທິໄຊ : ຮອງປະທານສະພາບໍລິຫານ;
   3. ທ່ານ ມາກ ລູອັນ : ສະມາຊິກສະພາບໍລິຫານ;
   4. ທ່ານ ນາງ ແສງເດືອນ ກ້ຽວສຸວັດ : ສະມາຊິກສະພາບໍລິຫານ;
   5. ທ່ານ ວຽງຄອນ ສິດທິໄຊ : ປະທານຄະນະກຳມະການເສດຖະກິດ, ສະມາຊິກສະພາບໍລິຫານ ອິດສະລະ;
   6. ທ່ານ ບຸນຖັນ ວົງສຸລີ : ປະທານຄະນະກຳມະການກວດສອບພາຍໃນ, ສະມາຊິກສະພາບໍລິຫານ ອິດສະລະ;
   7. ທ່ານ ສຈ ດາວອນ ຫວ່າງວິຈິດ : ປະທານຄະນະກຳມະການກວດກາຄວາມສ່ຽງ, ສະມາຊິກສະພາບໍລິຫານ ອິດສະລະ.

9. ກຳນົດເອົາວັນທີ 21 ມີນາ 2024 ເປັນມື້ປິດປຶ້ມບັນຊີທະບຽນຜູ້ຖືຄອງຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນ ໃນການເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2023;

10. ກຳນົດວັນທີເປີດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2023 ໃນວັນທີ 30 ເມສາ 2024 ເວລາ 8:30 ໂມງ ທີ່ຫ້ອງປະຊຸມໃຫຍ່ ຊັ້ນ 8 ອາຄານຕະຫຼາດຫຼັກຊັບລາວ, ບ້ານ ໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ;

11. ກຳນົດວາລະກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2023 ມີລາຍລະອຽດດັ່ງນີ້:

    ***ວາລະທີ 1:*** *ພິຈາລະນາ ແລະ ຮັບຮອງເອົາ ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2022ຄັ້ງວັນທີ 25 ພຶດສະພາ 2023 ;*

    ***ວາລະທີ 2:*** *ພິຈາລະນາ ແລະ ຮັບຮອງເອົາ ບົດລາຍງານຜົນການດຳເນີນທຸລະກິດ ປະຈຳປີ 2023 ແລະ ເອກະສານລາຍງານການເງິນ ທີ່ຜ່ານການກວດສອບຂອງຜູ້ກວດສອບພາຍນອກ ປະຈຳປີ 2023;*

    ***ວາລະທີ 3:*** *ພິຈາລະນາ ແລະ ຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2024;*

    ***ວາລະທີ 4:*** *ພິຈາລະນາ ແລະ ຮັບຮອງບໍ່ໃຫ້ມີການປັນຜົນ ຈາກຜົນການດຳເນີນທຸລະກິດປະຈຳປີ 2023 ອັນເນື່ອງມາຈາກບໍລິສັດ ຂາດທຶນໃນຊຸມປີຜ່ານມາ;*

    ***ວາລະທີ 5:*** *ພິຈາລະນາ ແລະ ຮັບຮອງແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກຄື ບໍລິສັດ PriceWaterhouse Coopers (Lao) Sole Co., Ltd. (“PWC”) ພ້ອມທັງກຳນົດຄ່າຈ້າງ ປະຈຳປີ 2024 ບໍ່ເກີນ 37.000 ໂດລາສະຫະລັດ;*

***ວາລະທີ 6 :*** *ພິຈາລະນາ ແລະ ຮັບຮອງການລາອອກຈາກຕຳແໜ່ງ ປະທານສະພາບໍລິຫານ ປທລ ຂອງ ທ່ານ ຫວ່າງ ຣັຕະນະວົງສ໌ ອັນເນື່ອງມາຈາກຄົບວາລະ;*

***ວາລະທີ 7 :*** *ພິຈາລະນາ ແລະ ຮັບຮອງ ທ່ານ ສີລາ ວຽງແກ້ວ ເປັນ ປະທານສະພາບໍລິຫານ ອິດສະຫຼະ;*

***ວາລະທີ 8:*** *ພິຈາລະນາ ແລະ ຮັບຮອງອາຍຸການຂອງສະມາຊິກສະພາບໍລິຫານ ປທລ ປະຈຳສົກປີ 2025-2027 ໂດຍມີລາຍຊື່ ແລະ ຕຳແໜ່ງຕໍ່ໄປນີ້:*

1. *ທ່ານ ສີລາ ວຽງແກ້ວ : ປະທານສະພາບໍລິຫານອິດສະລະ;*
2. *ທ່ານ ຄຳສອນ ສິດທິໄຊ : ຮອງປະທານສະພາບໍລິຫານ;*
3. *ທ່ານ ມາກ ລຸວັນ : ສະມາຊິກສະພາບໍລິຫານ;*
4. *ທ່ານ ນາງ ແສງເດືອນ ກ້ຽວສຸວັດ : ສະມາຊິກສະພາບໍລິຫານ;*
5. *ທ່ານ ວຽງຄອນ ສິດທິໄຊ : ປະທານຄະນະກຳມະການເສດຖະກິດ, ສະມາຊິກສະພາບໍລິຫານ ອິດສະລະ;*
6. *ທ່ານ ບຸນຖັນ ວົງສຸລີ : ປະທານຄະນະກຳມະການກວດກາຄວາມສ່ຽງພາຍໃນ,ສະມາຊິກສະພາບໍລິຫານ ອິດສະລະ;*
7. *ທ່ານ ສຈ ດາວອນ ຫວ່າງວິຈິດ : ປະທານຄະນະກຳມະການກວດສອບພາຍໃນ, ສະມາຊິກສະພາບໍລິຫານ ອິດສະລະ.*

ດັ່ງນັ້ນ, ຈຶ່ງຮຽນມາຍັງທ່ານເພື່ອຊາບ.

ດ້ວຍຄວາມເຄົາລົບ ແລະ ນັບຖືເປັນຢ່າງສູງ,

ປະທານສະພາບໍລິຫານ

ບໍລິສັດ ປິໂຕຣລ້ຳມເທຣດດິ້ງ ລາວ ມະຫາຊົນ Petroleum Trading Lao Public Company

ຫວ່າງ ຣັຕຕະນະວົງ
Vang RATANAVONG